


# ຟັງດົນຕີປະສານສຽງແຫ່ງມິດຕະພາບ ລາວ-ຈີນ

ຫວ່າງມໍ່ໆມານີ້, ກອງປະຊຸມສຳມະນາທິດສະດີສອງພັກ ລາວ-ຈີນ ຄັ້ງທີ 13 ໄດ້ຈັດຂຶ້ນຢູ່ນະຄອນປາກເຊ, ແຂວງຈຳປາສັກ ແຫ່ງ ສປປ ລາວ. ງານເລົ່າເລື່ອງທ່າມກາງສຽງເພງ ລາວ-ຈີນ ໃນຫົວຂໍ້ "ດອກຈຳປາພົບດອກມະລິ" ໄດ້ຈັດຂຶ້ນໃນໄລຍະດຽວກັນ. ເມື່ອບົດເພງຈີນ "ດອກມະລິ" ແລະ ບົດເພງລາວ "ດວງຈຳປາ" ໄດ້ດັງຂຶ້ນຢູ່ແຄມນ້ຳຂອງ, ເພື່ອນເກົ່າລາວ ແລະ ຈີນ ໄດ້ເຕົ້າໂຮມກັນ ເພື່ອເລົ່າເລື່ອງຮັກແພງ, ນີ້ກໍເໝືອນດັ່ງດົນຕີປະສານສຽງແຫ່ງມິດຕະພາບລະຫວ່າງລາວ-ຈີນ.











## ຮຽນຢູ່ປະເທດຈີນ ເພື່ອສ້າງສາບ້ານເກີດເມືອງນອນ

ປະສົບການທີ່ຮຽນຢູ່ຈີນກຳລັງກາຍເປັນຊັບສົມບັດອັນລ້ຳຄ່າໃນຊີວິດຂອງຊາວໜຸ່ມລາວຈຳນວນໜຶ່ງ. ພາຍຫຼັງຮຽນຈົບຈາກຈີນແລ້ວ, ເຂົາເຈົ້າໄດ້ກັບຄືນເມືອບ້ານເກີດເມືອງນອນດ້ວຍທັກສະທີ່ໜັກແໜ້ນ ແລະ ມີວິໄສທັດທີ່ກວ້າງໄກ, ນຳເອົາຄວາມຮູ້ທີ່ໄດ້ຮຽນຈາກຈີນມາໝູນໃຊ້ເຂົ້າໃນທຸກຂົງເຂດ, ແລະ ກາຍເປັນກຳລັງຊາວໜຸ່ມໃນການຊຸກຍູ້ການສ້າງສາຄວາມທັນສະໄໝຂອງລາວ ແລະ ການຮ່ວມມືມິດຕະພາບລະຫວ່າງລາວ-ຈີນ.

ທ່ານ ປອງດອງ ປະຊາພັກດີ, ກົງສຸນໃຫຍ່ ແຫ່ງ ສປປ ລາວ ປະຈຳ ນະຄອນຄຸນໝິງ ແຫ່ງ ສປ ຈີນ ກ່າວ ວ່າ: "ປະສົບການຮໍ່າຮຽນຢູ່ຈີນບໍ່ພຽງແຕ່ໄດ້ຍົກລະດັບຄວາມສາມາດຂອງຂ້າພະເຈົ້າເທົ່ານັ້ນ, ແຕ່ຍັງເຮັດໃຫ້ຂ້າພະເຈົ້າມີນ້ຳໃຈທີ່ອຸທິດກຳລັງວັງຊາຂອງຕົນເຂົ້າໃນການຊຸກຍູ້ການຮ່ວມມືລະຫວ່າງລາວ-ຈີນ ໃຫ້ລົງເລິກຢ່າງສະເໝີຕົ້ນສະເໝີປາຍ." ທ່ານກ່າວວ່າ, ນັກສຶກສາທີ່ກັບຄືນປະເທດພວມນຳໃຊ້ສິ່ງທີ່ຕົນຮຽນຮູ້ຈາກຈີນເຂົ້າໃນການສ້າງສາພັດທະນາປະເທດລາວ ຕາມເງື່ອນໄຂຕົວຈິງ, ຮ່ວມກັນຊຸກຍູ້ມິດຕະພາບລະຫວ່າງ ສປປ ລາວ ກັບ ແຂວງຢຸນນານ, ສປ ຈີນ.

ນາງ ລຳພອນ ທິມາລາ, ຄູສອນວິທະຍາໄລເຕັກນິກ-ວິຊາຊີບການລົດໄຟລາວ ກໍເຄີຍສຶກສາຮໍ່າຮຽນຢູ່ປະເທດຈີນເປັນເວລາ 18 ເດືອນ. ໃນໄລຍະດັ່ງກ່າວ, ນາງບໍ່ພຽງແຕ່ໄດ້ຮຽນທັກສະການສອນການຮຽນດ້ານທາງລົດໄຟເທົ່ານັ້ນ, ຫາກຍັງໄດ້ສຳຜັດກັບວັດທະນະທຳຈີນຢ່າງເລິກເຊິ່ງ. ປັດຈຸບັນ ນາງເປັນຄູສອນຢູ່ວິທະຍາໄລເຕັກນິກ-ວິຊາຊີບການລົດໄຟລາວ, ທຸກມື້, ລາວໄດ້ສອນພາສາຈີນ, ການຈັດສັນການຂົນສົ່ງຜູ້ໂດຍສານຕາມທາງລົດໄຟ ແລະ ມາລະຍາດການບໍລິການ ພ້ອມທັງນຳພານັກຮຽນໄປສຳຜັດກັບພາກປະຕິບັດຕົວຈິງຢູ່ສະຖານີລົດໄຟນະຄອນຫຼວງວຽງຈັນ ແລະ ສະຖານີລົດໄຟວຽງຈັນໃຕ້. "ນັກຮຽນລຸ້ນທຳອິດຂອງຂ້ອຍ ກຳລັງຈະຈົບການສຶກສາ ແລະ ເຂົ້າຮ່ວມທີມງານທີ່ຮັບໃຊ້ທາງລົດໄຟລາວ-ຈີນ, ຂ້ອຍມີຄວາມພາກພູມໃຈຫຼາຍ." ນາງຫວັງວ່າ ໃນອະນາຄົດຈະພານັກຮຽນໄປຂີ່ລົດໄຟ EMU ຂະບວນ "ລ້ານຊ້າງ" ແລະ ເລົ່າເລື່ອງທີ່ນາງໄດ້ຮູ້ໄດ້ເຫັນຢູ່ແຂວງຢຸນນານ.

ຜູ້ທີ່ໄດ້ຮັບຜົນປະໂຫຍດຄືກັນຍັງມີ ທ່ານ ບຸນສະຫວັດ ພົງດາລາ, ຮອງຫົວໜ້າສູນທົດລອງແນວພັນພືດທີ່ດີລະຫວ່າງລາວ-ຈີນ ຂອງສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດລາວ. ຫຼັງຈາກຮຽນຢູ່ສະຖາບັນວິທະຍາສາດກະສິກຳ ກວາງຊີ ເປັນເວລາ 1 ປີ, ລາວໄດ້ກາຍເປັນຜູ້ຊ່ຽວຊານດ້ານການເພາະພັນສາລີທີ່ມີຄວາມເກັ່ງກ້າສາມາດ. "ຂ້ອຍມັກກິນເຂົ້າປຽກສາລີຂອງຈີນຫຼາຍ." ທ່ານ ບຸນສະຫວັດ ພົງດາລາ ເວົ້າດ້ວຍຄວາມດີໃຈວ່າ: "ຂ້ອຍຫວັງວ່າ ໃນອະນາຄົດຂ້ອຍສາມາດໃຊ້ແນວພັນທີ່ດີເລີດທີ່ຕົນເອງເພາະພັນ ເພື່ອເຮັດອາຫານແຊບໆ ແກ່ທຸກໆຄົນ."

## ເສັ້ນທາງແຫ່ງການຮ່ວມມືນັບມື້ນັບກວ້າງຂວາງ

"ແສງສະຫວ່າງສາດສ່ອງໄປເຖິງບ່ອນໃດ, ເສັ້ນທາງກໍຈະປູໄປເຖິງບ່ອນນັ້ນ." ຄຳສຸພາສິດລາວຄຳນີ້ ໄດ້ສະແດງໃຫ້ເຫັນເຖິງເສັ້ນທາງແຫ່ງການພັດທະນາລະຫວ່າງລາວ-ຈີນ ໃນການຮ່ວມມືດ້ານພະລັງງານໄຟຟ້າ ແລະ ການໄປມາຫາສູ່ກັນລະຫວ່າງປະຊາຊົນສອງຊາດ. ຈາກການເຊື່ອມຕໍ່ຕາຂ່າຍໄຟຟ້າຈົນເຖິງຄວາມຮັກແພງກັນລະຫວ່າງຊາວບ້ານຢູ່ຕາມເຂດຊາຍແດນຂອງສອງປະເທດ, ປະຊາຊົນສອງຊາດ ກຳລັງໄດ້ສ້າງເສັ້ນທາງທີ່ມຸ່ງໜ້າໄປສູ່ຊີວິດທີ່ດີງາມ ໃຫ້ນັບມື້ນັບກວ້າງຂວາງ ແລະ ມີຄວາມອົບອຸ່ນ ດ້ວຍການກະທຳຕົວຈິງ.

ນາງ ເທບມຸກດາ ເພັດຊະລາດ, ພະນັກງານບໍລິສັດລົງທຶນພະລັງງານໄຟຟ້າ ລາວ-ຈີນ ຈຳກັດ ທີ່ຂຶ້ນກັບບໍລິສັດພະລັງງານໄຟຟ້າສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຈຳກັດ ຂອງກຸ່ມບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນ ມີຄວາມຮູ້ສຶກຢ່າງເລິກເຊິ່ງຕໍ່ເລື່ອງນີ້. ນັບແຕ່ໄດ້ບັນຈຸເຂົ້າເປັນ "ພະນັກງານໄຟຟ້າ" ໃນປີ 2019 ເປັນຕົ້ນມາ, ນາງໄດ້ເປັນສັກຂີພິຍານຕໍ່ໂຄງການສະໜອງພະລັງງານພາຍນອກຂອງເສັ້ນທາງລົດໄຟ ລາວ-ຈີນ ຈາກແຜນຜັງກາຍເປັນຄວາມຈິງ, ນາງຍັງມີສ່ວນຮ່ວມໃນການລິເລີ່ມໂຄງການສາຍສົ່ງໄຟຟ້າ 500 kV ລະຫວ່າງລາວ-ຈີນ ເຊັ່ນດຽວກັນ.

"ຂ້ອຍຮູ້ສຶກໂຊກດີຫຼາຍທີ່ມີສ່ວນຮ່ວມໃນການຮ່ວມມືດ້ານພະລັງງານໄຟຟ້າ ລະຫວ່າງລາວ-ຈີນ ເຊິ່ງໄດ້ເຮັດໃຫ້ຂ້ອຍຮູ້ຈັກຈີນຫຼາຍຂຶ້ນ ແລະ ພົບເຫັນວ່າວັດທະນະທຳລາວ ໄດ້ຮັບຄວາມນິຍົມຊົມຊອບຈາກຊາວຕ່າງປະເທດນັບມື້ນັບຫຼາຍຂຶ້ນ." ນາງ ເທບມຸກດາ ເພັດຊະລາດ ກ່າວວ່າ: ນອກໂມງການ, ນາງມັກພາເພື່ອນຮ່ວມງານຈີນໄປເລືອກຊື້ຜ້າແພ ເພື່ອສັ່ງຕັດເຄື່ອງນຸ່ງແບບລາວໆ, ນາງກໍໄດ້ຮັບຂອງຂວັນທີ່ເປັນຊຸດຈີນບູຮານຈາກເພື່ອນຮ່ວມງານຈີນອີກດ້ວຍ. ນາງເຫັນວ່າ, ການເຂົ້າໃຈປະເທດໜຶ່ງ ແລະ ຮັບຮູ້ວັດທະນະທຳຢ່າງໜຶ່ງ ຕ້ອງມີນ້ຳໃຈເປີດກວ້າງ, "ກໍຄືສອງປະເທດລາວ-ຈີນ ຮ່ວມກັນສ້າງເຂື່ອນໄຟຟ້າ, ຮ່ວມກັນເຊື່ອມຕໍ່ຕາຂ່າຍໄຟຟ້າ ແລະ ກ້າວໄປສູ່ເສັ້ນທາງຊີວິດດີງາມ ທີ່ນັບມື້ນັບກວ້າງຂວາງ."

ການຮ່ວມມືດ້ານພະລັງງານໄຟຟ້າໄດ້ຊຸກຍູ້ການພັດທະນາປະເທດຊາດ, ແລະ ການຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງປະຊາຊົນ ໄດ້ເຮັດໃຫ້ປະຊາຊົນເກີດມີຄວາມຮູ້ສຶກອົບອຸ່ນ. ທ່ານ ຢຽນຊູ, ນາຍບ້ານ ບ້ານແລ ເມືອງຫຼ້າ, ກິ່ງແຂວງປົກຄອງຕົນເອງເຜົ່າລີ້ສິບສອງພັນນາແຂວງຢຸນນານ ໄດ້ແບ່ງປັນມິດຕະພາບທີ່ດີງາມລະຫວ່າງບ້ານຕ່າງໆທີ່ຢູ່ຕາມເຂດຊາຍແດນລາວ-ຈີນ ທີ່ໄດ້ສືບທອດມາເປັນເວລາຍາວນານ ໂດຍຜ່ານທາງວິດີໂອ: ປີ 2023 ບ້ານແລໄດ້ເຊັນສັນຍາບ້ານມິດຕະພາບກັບ ບ້ານມານາຄຳ, ເມືອງສິງ, ສປປ ລາວ. ເມື່ອຮູ້ຂ່າວວ່າ ທາງໃນບ້ານມານາຄຳເປັນທາງດິນແດງ ແລະ ເດັກນ້ອຍເດີນທາງໄປຮຽນຍາກໃນຍາມຝົນ, ຊາວບ້ານໃນບ້ານແລ ໄດ້ລະດົມທຶນຊື້ຊີມັງ 66 ໂຕນ ເພື່ອຊ່ວຍສ້າງຖະໜົນເບຕົງໃຫ້ບ້ານມິດຕະພາບ. ປັດຈຸບັນ, ເສັ້ນທາງເບຕົງທີ່ຮາບພຽງບໍ່ພຽງແຕ່ໄດ້ອຳນວຍຄວາມສະດວກໃຫ້ແກ່ການເດີນທາງພາຍໃນບ້ານເທົ່ານັ້ນ, ແຕ່ຍັງກາຍເປັນ "ເສັ້ນທາງປະສານໃຈ" ລະຫວ່າງສອງບ້ານ. ທ່ານ ຢຽນຊູ ກ່າວວ່າ: "ຫຼັງຈາກໄດ້ປູທາງໃໝ່ແລ້ວ, ພວກເຮົາໄດ້ເຊີນເຂົາເຈົ້າໄປຕັ້ງບູດຂາຍເຄື່ອງທຸກໆເດືອນ ເພື່ອຊ່ວຍເຂົາເຈົ້າສ້າງລາຍໄດ້ເພີ່ມຂຶ້ນຈຳນວນໜຶ່ງ, ຊາວບ້ານໃນສອງບ້ານດັ່ງກ່າວກໍນັບມື້ນັບມີຄວາມຮັກແພງຫຼາຍຂຶ້ນກວ່າເກົ່າ."

## ສ້າງຂົວທາງຈິດໃຈ ເພື່ອເສີມສ້າງມິດຕະພາບ

ມິດຕະພາບລາວ-ຈີນ ມີຄວາມໝັ້ນຄົງຂະໜົງແກ່ນ, ການຮ່ວມມືໃນຂົງເຂດຕ່າງໆ ພວມແຕກໜໍ່ຈໍ່ແໜງ ແລະ ກ້າວເຂົ້າສູ່ລວງເລິກ. ຈາກການແລກປ່ຽນດ້ານສື່ມວນຊົນ ຈົນເຖິງການຮຽນຮູ້ວັດທະນະທຳເຊິ່ງກັນແລະກັນ, ປະຊາຊົນສອງຊາດມີຄວາມປາຖະໜາຢ່າງແຮງກ້າໃນການລົງເລິກການຮ່ວມມືລະຫວ່າງສອງປະເທດ.

ທ່ານ ວັນໄຊ ຕະວິນຍານ, ອະດີດຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ, ຫົວໜ້າບັນນາທິການໃຫຍ່ໜັງສືພິມປະຊາຊົນ **ທີ່ມີປະສົບການດ້ານສື່ມວນ**ຊົນເປັນເວລາ 46 ປີ ໄດ້ເດີນທາງໄປຢ້ຽມຢາມຈີນຫຼາຍຄັ້ງ ແລະ ມີຄວາມຮູ້ສຶກຢ່າງເລິກເຊິ່ງຕໍ່ຄວາມເປັນມືອາຊີບທີ່ມີປະສິດທິພາບສູງຂອງສື່ມວນຊົນຈີນ. ທ່ານໄດ້ສະເໜີວ່າ ສອງປະເທດຄວນເພີ່ມທະວີການຮ່ວມມືໃນການແລກປ່ຽນເນື້ອໃນຂໍ້ມູນຂ່າວສານ, ການຝຶກອົບຮົມບຸກຄະລາກອນ ແລະ ປັນຍາປະດິດ ເປັນຕົ້ນ, "ໃຫ້ກຳລັງສື່ມວນຊົນຊຸກຍູ້ການພັດທະນາການພົວພັນ ລະຫວ່າງສອງປະເທດຢ່າງເລິກເຊິ່ງ".

ທ່ານ ຫຼິວອາລານ ຈາກນະຄອນຫຼວງປັກກິ່ງ ສປ ຈີນ ໄດ້ດຳລົງຊີວິດຢູ່ປະເທດລາວເປັນເວລາຫຼາຍປີ, ໃນປີ 2013, ລາວໄດ້ສ້າງຕັ້ງສະຕູດີໂອ Hope Vision ຢູ່ນະຄອນຫຼວງວຽງຈັນ ເພື່ອສ້າງຂົວແລກປ່ຽນວັດທະນະທຳ ດ້ວຍຮູບພາບ. ງານວາງສະແດງສິລະປະຮ່ວມສະໄໝລາວພາຍໃຕ້ຫົວຂໍ້ ຄວາມຫວັງ ທີ່ທ່ານ ຫຼິວອາລານ ເປັນເຈົ້າພາບຈັດຂຶ້ນ ໄດ້ຊ່ວຍໃຫ້ຮູບແຕ້ມຂອງເດັກນ້ອຍພິເສດສາມາດວາງສະແດງນຳຮູບແຕ້ມຂອງນັກສິລະປິນທີ່ດີເດັ່ນລ້ຳສະໄໝ. ລາວເຊື່ອໝັ້ນວ່າ: "ສິລະປະສາມາດກາຍເປັນແສງສະຫວ່າງທີ່ຮຸ່ງເຮືອງ ເພື່ອໃຫ້ກຸ່ມຄົນຕ່າງໆສາມາດໄດ້ຮູ້ໄດ້ເຫັນ ແລະ ສິ່ງຕໍ່ຄວາມບຸນຄຸນລະຫວ່າງປະເທດ."

ນາງ ຢູເຈ້ຍ, ນັກປຸງຊາແຂວງຢຸນນານຈີນ ໄດ້ປະກອບອາຊີບໃນຂະແໜງການຊາມາເປັນເວລາຫຼາຍກວ່າ 20 ປີ, ນາງກ່າວວ່າ: "ຊາຂອງແຂວງຈຳປາສັກ ປະເທດລາວ ກັບຊາຜູເອີຂອງຈີນ ມີຄຸນນະພາບ ແລະ ລົດຊາດ ທີ່ຄ້າຍຄືກັນ ຍ້ອນໄດ້ປູກຢູ່ແຄມແມ່ນ້ຳລຳດຽວກັນ, ນັ້ນກໍຄືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ເຖິງແມ່ນວ່າສອງປະເທດມີພາສາ ແລະ ຮີດຄອງປະເພນີທີ່ແຕກຕ່າງກັນ, ແຕ່ປະຊາຊົນສອງຊາດລ້ວນແຕ່ມັກດື່ມນ້ຳຊາ." ນາງຫວັງວ່າ ສາຍພົວພັນມິດຕະພາບຈີນ-ລາວ ຈິ່ງໝັ້ນຄົງຂະໜົງແກ່ນປານຕົ້ນຊາບູຮານພັນປີຂອງລາວ ແລະ ມີກິ່ນຫອມຫວນຍາວນານຄືກັບຊາຜູເອີຂອງຈີນ.

ເມື່ອສຽງເພງ "ໄຂ່ມຸກແມ່ນ້ຳຂອງ" ດັງຂຶ້ນ, ຊາວໜຸ່ມຈາກສອງປະເທດລາວ ແລະ ຈີນໄດ້ຟ້ອນລຳທຳເພງຕາມຈັງຫວະ, ເລື່ອງລາວລະຫວ່າງ "ດວງຈຳປາ" ແລະ "ດອກມະລິ" ຍັງສືບຕໍ່ກັນໄປຊົ່ວກາລະນານ.

(ບົດ: Li Ling, Hu Lixian)

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com